## ໂຄງການສົ່ງເສີມ ການຮຽນຮູ້ກ່ຽວກັບທີ່ດິນ LIFE

# ວິທີການປູກຝັງຈິດສຳນຶກ
# ເພື່ອສະໜັບສະໜູນການຮັບຮູ້ສິດຄອບຄອງ
# ຕາມປະເພນີໃນເຂດ 3 ປະເພດປ່າ,
# ແຂວງຄຳມ່ວນ, ສປປ ລາວ





ກຳລະນີສຶກສາໂດຍໂຄງການສົ່ງເສີມການຮຽນຮູ້
ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE)
ແລະ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG)



ເສດຖະກິດຂອງ ສປປ ລາວ ພວມຂະຫຍາຍຕົວຢ່າງວ່ອງໄວ ເນື່ອງຈາກຜົນຂອງການລົງທຶນທັງພາຍໃນ ແລະ ຕ່າງປະເທດ. ບັນດາລະບຽບການດ້ານການລົງທຶນ ກໍໄດ້ຮັບການປັບປຸງຄືນ ເພື່ອດຶງດູດນັກລົງທຶນ ແລະ ເພື່ອເລັ່ງລັດການເຕີບໂຕທາງດ້ານເສດຖະກິດ. ການລົງທຶນໃນຂະແໜງກະສິກຳ ແມ່ນໜຶ່ງໃນຂະແໜງການຕົ້ນຕໍຂອງປະເທດ, ໂດຍສະເພາະ ການປູກພືດຕົ້ນໄມ້ ເຊັ່ນ ກ້ວຍ, ອ້ອຍ ຫຼື ຢາງພາລາ. ຕະຫຼອດ 10 ປີຜ່ານມາ, ປ່າທຳມະຊາດຫຼຸດລົງ ຍ້ອນການຫັນປ່ຽນນຳໃຊ້ທີ່ດິນ ຊຶ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການນຳໃຊ້ທີ່ດິນຕາມປະເພນີຂອງໝູ່ບ້ານ ຊຶ່ງເປັນແຫຼ່ງອາຫານຈາກທີ່ດິນເຮັດກະສິກຳ ກໍຫຼຸດລົງ. ແຂວງຄຳມ່ວນຕັ້ງຢູ່ພາກກາງຂອງປະເທດ ແລະ ມີຊາຍແດນຕິດກັບປະເທດຫວຽດນາມທາງທິດຕາເວັນອອກ ແລະ ປະເທດໄທທາງທິດຕາເວັນຕົກ, ແມ່ນໜຶ່ງໃນຫຼາຍແຂວງ ທີ່ພວມປະເຊີນໜ້າກັບບັນຫາທ້າທາຍດັ່ງກ່າວ. ຫຼາຍໝູ່ບ້ານ ແມ່ນຕັ້ງຢູ່ບ່ອນໜຶ່ງໃນສາມປະເພດປ່າ (ຊຶ່ງກຳນົດໄວ້ໃນກົດໝາຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ມາດຕາ 14 (ປັບປຸງ) ການແບ່ງປ່າເປັນສາມປະເພດ, ແລະ ດຳລັດສະເພາະ: ດຳລັດວ່າດ້ວຍປ່າສະຫງວນ, ເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015; ດຳລັດວ່າດ້ວຍ ປ່າປ້ອງກັນ, ເລກທີ 333/ນຍ, ລົງວັນທີ 19/7/2010; ດຳລັດວ່າດ້ວຍ ປ່າຜະລິດ, ເລກທີ 59/ນຍ, ລົງວັນທີ 2/5/2002) , ຊຶ່ງຕົ້ນຕໍ ກໍແມ່ນປ່າຜະລິດ, ປ່າສະຫງວນ ແລະ ປ່າປ້ອງກັນ.

ການຈັດຕັ້ງປະຕິບັດການຈັດສັນທີ່ດິນ ແລະ ດຳເນີນການແບ່ງເຂດໃນແຂວງຄຳມ່ວນ ແມ່ນປະເຊີນໜ້າກັບບັນຫາຫຍຸ້ງຍາກຫຼາຍດ້ານເນື່ອງຈາກ ຊາວບ້ານ ອາໄສຢູ່ ແລະ ທຳມາຫາກິນໃນເຂດປ່າໄມ້ເປັນເວລາຫຼາຍທົດສະວັດ, ໃນຂະນະທີ່ ບ້ານ ຫຼື ທີ່ດິນຂອງພວກເຂົາຫາກໍ່ໄດ້ຖືກກຳນົດໃຫ້ເປັນສ່ວນໜຶ່ງຂອງປ່າສາມປະເພດໃນຫວ່າງບໍ່ດົນມານີ້.




*ຂອບເຂດບໍລິເວນຂອງໂຄງການໃນເມືອງນາກາຍ*

ຄຽງຄູ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII ແລະ ເປົ້າໝາຍເພື່ອເຮັດໃຫ້ ສປປ ລາວ ເປັນລັດແຫ່ງກົດໝາຍ, ຊາວບ້ານຫຼາຍຄົນທີ່ດຳລົງຊີວິດຕາມປ່າໄມ້ເປັນເວລາຫຼາຍຮຸ່ນຄົນກ່ອນທີ່ກົດໝາຍກ່ຽວກັບການປົກປັກຮັກສາປ່າໄມ້ຈະປະກາດໃຊ້, ເຫັນໄດ້ວ່າ ການດຳລົງຊີວິດຂອງພວກເຂົາຕົກຢູ່ໃນຄວາມສ່ຽງ. ບັນດາກົດໝາຍໃໝ່ກ່ຽວກັບການນຳໃຊ້ປ່າໄມ້ ແລະ ການປົກປັກຮັກສາປ່າໃນບາງກໍລະນີ ເຮັດໃຫ້ເກີດຂໍ້ຈຳກັດສິດຂອງປະຊາຊົນໃນການນຳໃຊ້ທີ່ດິນປ່າໄມ້ສາມປະເພດ. ໃນບາງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ (DoNRE) ໄດ້ເລັ່ງລັດການອອກໃບຕາດິນ, ເຮັດໃຫ້ໃບຕາດິນທັບຊ້ອນກັບເສັ້ນແບ່ງເຂດກັບປ່າສາມປະເພດໃນພື້ນທີ່ບໍລິເວນນັ້ນ.

***MRLG: ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ*** *ແມ່ນສູນກາງໃນການພັດທະນາສິ່ງທີ່ທ້າທາຍຢູ່ບັນດາປະເທດ ກຳປູເຈຍ, ສປປ ລາວ, ມຽນມ້າ ແລະ ຫວຽດນາມ. ລັດຖະບານເຫຼົ່ານີ້ ພວມປັບປຸງນະໂຍບາຍ ແລະ ການປະຕິບັດກ່ຽວກັບທີ່ດິນ ເພື່ອປະເຊີນໜ້າກັບບັນຫາທ້າທາຍເຫຼົ່ານີ້. ໂຄງການແນໃສ່ ເພື່ອ (i) ຊ່ວຍໃນການສ້າງນະໂຍບາຍ ແລະ ການປະຕິບັດທີ່ເອື້ອອຳນວຍຍິ່ງຂຶ້ນ ເພື່ອໃຫ້ໄດ້ຮັບສິດ ແລະ ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງຄອບຄົວຊາວກະສິກອນ; ແລະ (ii) ເພື່ອສ້າງຄວາມເຂັ້ມແຂງດ້ານປະສິດທິຜົນຂອງບັນດາຜູ້ມີສ່ວນກ່ຽວຂ້ອງຜ່ານການຮຽນຮູ້, ການສ້າງພັນທະມິດ ແລະ ການຮ່ວມມືລະດັບພາກພື້ນ. ໂຄງການ MLRG ແມ່ນຕັ້ງຢູ່ ສປປ ລາວ ໂດຍມີຫ້ອງການຢູ່ສາມປະເທດອື່ນໆ ຄື: ກຳປູເຈຍ, ມຽນມ້າ ແລະ ຫວຽດນາມ. ໂຄງການນີ້ ສະໜັບສະໜູນກິດຈະກຳຕ່າງໆ ຢ່າງກວ້າງຂວາງ (ການຝຶກອົບຮົມ, ການແລກປ່ຽນບົດຮຽນ, ກໍລະນີສຶກສາ, ການວິໄຈຈຸດສຸມ, ການສ້າງເອກະສານ, ກອງປະຊຸມວິຊາການ ແລະ ການສຳມະນາ) ທັງໃນຂັ້ນທ້ອງຖິ່ນ, ຂັ້ນປະເທດ ແລະ ລະດັບພາກພື້ນ (ເວັບໄຊ້ MRLG).*

ໃນເດືອນ ສິງຫາ 2018, ໂຄງການ MRLG ເລີ່ມຕົ້ນຂະບວນການເພື່ອພັດທະນາໜ້າວຽກກ່ຽວກັບ ການຮັບຮູ້ເງື່ອນໄຂການນຳໃຊ້ທີ່ດິນຕາມປະເພນີ (CT) ໃນ ສປປ ລາວ. ໃນເບື້ອງຕົ້ນ, ການປຶກສາຫາລື ແມ່ນຈຳກັດສະເພາະ ແຕ່ພາກສ່ວນຕ່າງໆທີ່ບໍ່ແມ່ນພາກລັດ, ເຖິງຢ່າງໃດກໍຕາມ, ຂະບວນການແບບມີສ່ວນຮ່ວມຂອງທຸກພາກສ່ວນ ເລີ່ມຕົ້ນໃນເດືອນ ເມສາ 2019 ເມື່ອກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ສະແດງຄວາມຍິນດີໃນການຮ່ວມມືກັນ. ໃນເວລານັ້ນ ກໍໄດ້ຮ່າງ ແລະ



ນຳສະເໜີແຜນວຽກຍຸດທະສາດ (SWP) ໃຫ້ແກ່ຄະນະກຳມະການຊີ້ນຳໂຄງການ MRLG (PSC). SWP ສະບັບປັບປຸງ ໄດ້ລວມເອົາໜ້າວຽກສະໜັບສະໜູນທາງດ້ານນະໂຍບາຍ ຂອງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG), ຊຶ່ງສະໜັບສະໜູນໃຫ້ແກ່ RECOFTC ເພື່ອປະກອບເຂົ້າໃນ ຂໍ້ລິເລີ່ມ GLTN-VFI-TABI, ແລະ ກົມທີ່ດິນ (DOL) ຂອງ ກຊສ ເພື່ອທົດລອງໂຄງການການຮັບຮູ້ສິດການນຳໃຊ້ທີ່ດິນຕາມປະເພນີໃນປ່າສາມປະເພດ ແລະ ການສ້າງຄວາມຮັບຮູ້ເພີ່ມຂຶ້ນໃຫ້ແກ່ບັນດາຊາວບ້ານ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ.

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE) ແມ່ນສະໜັບສະໜູນ MRLG ແລະ ກົມທີ່ດິນ ເພື່ອຈັດຕັ້ງປະຕິບັດອົງປະກອບດ້ານການເພີ່ມຄວາມຮັບຮູ້ກ່ຽວກັບເງື່ອນໄຂການນຳໃຊ້ທີ່ດິນຕາມປະເພນີຂອງປະຊາຊົນລາວໃນເຂດບໍລິເວນປ່າໄມ້. ເວົ້າລະອຽດ ແມ່ນວ່າໂຄງການ LIFE ຈັດຕັ້ງປະຕິບັດ ໂດຍຝຶກອົບຮົມ ແນະນຳກ່ຽວກັບບັນດາກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂີດຄວາມສາມາດຂອງສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ ເພື່ອຈັດຕັ້ງປະຕິບັດກິດຈະກຳຕ່າງໆໃນການເພີ່ມຄວາມຮັບຮູ້ເຂົ້າໃຈ ແລະ ໝູນໃຊ້ການມີສ່ວນຮ່ວມຢ່າງຫ້າວຫັນຂອງບັນດາຊຸມຊົນ ແລະ ປະຊາຊົນເຂົ້າໃນຂັ້ນຕອນການເຮັດໃບຕາດິນສຳລັບ ເຂດປ່າປະເພດຕ່າງໆ ຊຶ່ງເປັນອົງປະກອບສຳຄັນຂອງການຮັບຮູ້ ສິດນຳໃຊ້ທີ່ດິນຕາມປະເພນີຂອງປະຊາຊົນລາວໃນປ່າສາມປະເພດ. ໃນການຝຶກອົບຮົມແບບໃກ້ຊິດ ໂດຍລວມແລ້ວ, ບັນດາພະນັກງານທີ່ກ່ຽວຂ້ອງຈາກ ກຊສ ແລະ ກະຊວງ ກປ ທັງໃນຂັ້ນສູນກາງ, ແຂວງ ແລະ ຂັ້ນເມືອງ ໄດ້ຮັບການຝຶກອົບຮົມແບບໃກ້ຊິດພ້ອມກັນກັບ ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ.

***LIFE:*** *ແມ່ນໂຄງການສຳຄັນກ່ຽວກັບການເພີ່ມທະວີຄວາມຮັບຮູ້ເຂົ້າໃຈພາຍໃຕ້ LIWG ຊຶ່ງເປັນເຈົ້າພາບໂດຍ VFI ແລະ ຈັດຕັ້ງປະຕິບັດໂດຍ ບັນດາຄູ່ຮ່ວມມືຮຸ້ນສ່ວນບົນພື້ນຖານຄວາມເທົ່າທຽມກັນ: ປັດຈຸບັນ ໂຄງການ LIFE ໄດ້ຮັບທຶນສະໜັບສະໜູນຈາກສະຫະພາບເອີຣົບ. ບັນດາຄູ່ຮ່ວມມື ລວມມີອົງການ CARE, CCL, CORD, FAO, GAPE, GIZ, Helvetas, JVC, MCC, ອອກຟາມ, VFI ແລະ World Renew. ກົມຄຸ້ມຄອງທີ່ດິນກະສິກຳ (DALaM) ພາຍໃຕ້ກະຊວງ ກະສິກຳ ແລະ ປ່າໄມ້ (ກປ) ແມ່ນ ຄູ່ຮ່ວມມືຕົ້ນຕໍຂອງໂຄງການຈາກພາກລັດ. ໂຄງການ LIFE ແນໃສ່ ເພື່ອ 'ຍົກສູງ' ບັນຫາທີ່ດິນເຂົ້າໃນບັນດາກິດຈະກຳປົກກະຕິຂອງອົງການຈັດຕັ້ງທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ, ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຜູ້ຄອບຄອງທີ່ດິນຂະໜາດນ້ອຍ ແລະ ຄອບຄົວຊາວກະສິກອນໃນດ້ານຄວາມໝັ້ນຄົງຂອງການຄອບຄອງທີ່ດິນໃນໄລຍະຍາວ. ສິ່ງນີ້ ແມ່ນດຳເນີນການຜ່ານບັນດາກິດຈະກຳ ການສ້າງຂີດຄວາມສາມາດດ້ານນະໂຍບາຍ ແລະ ນິຕິກຳຕ່າງໆ ທີ່ ສຳຄັນ ຊຶ່ງກ່ຽວຂ້ອງກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ແກ່ ບັນດາອົງການຈັດຕັ້ງທາງສັງຄົມ, ຄູ່ຮ່ວມພັດທະນາ, ລັດຖະບານ ແລະ ຜູ້ມີສ່ວນກ່ຽວຂ້ອງພາກເອກະຊົນ. ກະລຸນາ ເບິ່ງຮູບເງົາກ່ຽວກັບໂຄງການ LIFEs ຜ່ານຊ່ອງທາງນີ້:*
https://bit.ly/3sMDQ6R

## ເປົ້າໝາຍຂອງກໍລະນີສຶກສາ

- ເພື່ອຍົກໃຫ້ເຫັນບັນຫາ ແລະ ອຸປະສັກຢູ່ຂັ້ນເມືອງ ແລະ ຂັ້ນບ້ານທີ່ເກີດຂຶ້ນຈາກກິດຈະກຳການອອກໃບຕາດິນໃນປ່າສາມປະເພດ;
- ເພື່ອສະແດງໃຫ້ເຫັນຜົນກະທົບຂອງວຽກຝຶກອົບຮົມແບບໃກ້ຊິດໂຄງການ LIFE ໃຫ້ແກ່ພະນັກງານຈາກ ກົມທີ່ດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ ກ່ຽວກັບ ຄວາມຮູ້ ແລະ ຂີດຄວາມສາມາດຂອງພວກເຂົາ ເພື່ອຈັດຕັ້ງປະຕິບັດກິດຈະກຳປູກຈິດສຳນຶກ ໃນຂັ້ນບ້ານ;
- ເພື່ອໃຫ້ຄຳແນະນຳ ແລະ ວິທີການໃນຕໍ່ໜ້າສຳລັບ ກິດຈະກຳປູກຈິດສຳນຶກ ໂດຍໂຄງການ ແລະ ໂດຍບັນດາຄູ່ຮ່ວມມືຂອງພາກລັດ.

## ການຈັດຝຶກອົບຮົມແບບໃກ້ຊິດໃຫ້ແກ່ບັນດາກຸ່ມເປົ້າໝາຍທີ່ກ່ຽວຂ້ອງ

ຈາກເດືອນ ມິຖຸນາ ຫາ ກໍລະກົດ 2020, ໂຄງການ LIFE ໄດ້ຈັດຕັ້ງປະຕິບັດ 4 ຝຶກອົບຮົມແບບໃກ້ຊິດໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງໃຫ້ແກ່ບັນດາຜູ້ມີສ່ວນກ່ຽວຂ້ອງຈາກ ກົມທີ່ດິນຂອງ ກຊສ, ກົມປ່າໄມ້ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ພາຍໃຕ້ ກະຊວງ ກປ ແລະ ສະຫະພັນແມ່ຍິງລາວ, ແນວລາວສ້າງຊາດ, ພະແນກກະສິກຳ ແລະ ປ່າໄມ້ແຂວງ\ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ/ເມືອງ ກ່ຽວກັບສິດຂອງປະຊາຊົນລາວໃນການນຳໃຊ້ທີ່ດິນຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ້ງ. ໂດຍລວມແລ້ວ, ໂຄງການ LIFE ໄດ້ຝຶກອົບຮົມພະນັກງານລັດທັງໝົດ 52 ຄົນ (ຍິງ 14 ຄົນ) ທັງຂັ້ນສູນກາງ ແລະ ຂັ້ນແຂວງຄຳມ່ວນ ແລະ ເມືອງ ຫີນບູນ, ເມືອງ ເຊບັ້ງໄຟ ແລະ ເມືອງນາກາຍ. ແຕ່ລະ

ວຽກຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ ແລະ ລວມເອົາການຝຶກອົບຮົມເຮັດວຽກຕົວຈິງ ເພື່ອຝຶກອົບຮົມແບບໃກ້ຊິດໃຫ້ບັນດາຜູ້ເຂົ້າຮ່ວມ ຊຶ່ງໂຄງການ LIFE ສະໜັບສະໜູນພວກເຂົາໃນການຈັດຕັ້ງປະຕິບັດບັນດາກິດຈະກຳປູກຈິດສຳນຶກ ກ່ຽວກັບສິດການນຳໃຊ້ທີ່ດິນຕາມປະເພນີ ໃນບັນດາໝູ່ບ້ານເປົ້າໝາຍຂອງໂຄງການ.

ອີງຕາມການສ້າງໂຄງການ MRLG, ພາຍຫຼັງໄດ້ຮັບການຝຶກອົບຮົມແບບໃກ້ຊິດໂດຍໂຄງການ LIFE ແລ້ວ, ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມທີ່ໄດ້ຮັບ**ການຝຶກອົບຮົມແບບໃກ້ຊິດ**ແມ່ນຈັດຕັ້ງປະຕິບັດກິດຈະກຳປູກຈິດສຳນຶກໂດຍເຂົາເຈົ້າເອງໃນບັນດາໝູ່ບ້ານເປົ້າໝາຍ.



*ກຸ່ມສົນທະນາ ຊາຍທີ່ເມືອງຫີນບູນ*

ເນື້ອໃນສຳຄັນຂອງວຽກຝຶກອົບຮົມ-ແນະນຳຂອງໂຄງການ LIFE ໃຫ້ແກ່ພະນັກງານລັດຂັ້ນສູນກາງ ແລະ ຂັ້ນເມືອງ ແມ່ນ:

- ວິທີການຝຶກອົບຮົມ ຊຶ່ງຈັດໃຫ້ມີທັກສະການອຳນວຍຄວາມສະດວກໃຫ້ແກ່ບັນດາຜູ້ເຂົ້າຮ່ວມ. ສຳລັບສ່ວນຂອງການຝຶກອົບຮົມການເປັນຜູ້ອຳນວຍຄວາມສະດວກ (ToT), ບັນດາຜູ້ເຂົ້າຮ່ວມ ໄດ້ຮັບການຝຶກໃນທັກສະຄວາມຮູ້ທີ່ແຕກຕ່າງກັນ ຊຶ່ງ ລວມມີ: ທັກສະການເຈລະຈາ, ການເຮັດວຽກເປັນທີມ, ການເວົ້າໃນທີ່ສາທາລະນະ, ການວິເຄາະ ແລະ ການວາງແຜນ;
- ຄວາມຮູ້ທາງດ້ານເຕັກນິກວິຊາການ;
- ນຳສະເໜີມາດຕາ 130 ຂອງກົດໝາຍວ່າດ້ວຍ ທີ່ດິນສະບັບໃໝ່ ເລກທີ 70/ສພຊ ປີ 2019, ແລະ ມາດຕາ 63 ແລະ 64 ຂອງກົດໝາຍວ່າດ້ວຍ ປ່າໄມ້ ທີ່ກ່ຽວຂ້ອງກັບສິດການນຳໃຊ້ທີ່ດິນຕາມປະເພນີ;
- ຂະບວນການແກ້ໄຂຂໍ້ຂັດແຍ້ງໃນມາດຕາ 163, 164, 165 ແລະ 166 ຂອງກົດໝາຍເລກທີ 70/ສພຊ ປີ 2019;
- ການວິເຄາະກ່ຽວກັບສິດການນຳໃຊ້ທີ່ດິນຕາມປະເພນີ ແລະ ຊັບພະຍາກອນທຳມະຊາດ;
- ການນຳສະເໜີກ່ຽວກັບແຜນ SMART ສຳລັບການວາງແຜນວຽກຝຶກອົບຮົມແບບໃກ້ຊິດພາກສະໜາມ.

ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ ມີບົດບາດສຳຄັນໃນແຜນຂອງລັດຖະບານ ເພື່ອຈັດຕັ້ງປະຕິບັດກິດຈະກຳການສ້າງຈິດສຳນຶກໃຫ້ແກ່ຊາວບ້ານ ໃນລະຫວ່າງຂະບວນການຂຶ້ນທະບຽນທີ່ດິນ ແລະ ການອອກໃບຕາດິນໃນ ສປປ ລາວ (ຄຳແນະນຳ ກ່ຽວກັບການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ເລກທີ 6036/ ຊສ, ລົງວັນທີ 27/8/2014, ໝວດທີ II, ຂໍ້ 2.1)

ເປົ້າໝາຍຂອງວຽກຝຶກອົບຮົມແບບໃກ້ຊິດ ແມ່ນເພື່ອເພີ່ມຂີດຄວາມສາມາດຂອງບັນດາຜູ້ເຂົ້າຮ່ວມກ່ຽວກັບ ການເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ການຝຶກອົບຮົມ, ທັກສະການສະເໜີບັນຍາຍ ແລະ ການຝຶກວິທີການຕ່າງໆ ສຳລັບການເຂົ້າຮ່ວມຂອງຊຸມຊົນ ໃນກິດຈະກຳຕ່າງໆ. ໃນສ່ວນຂອງເຕັກນິກວິຊາການ ແມ່ນອີງໃສ່ ນິຕິກຳທີ່ມີຢູ່ໃນປັດຈຸບັນກ່ຽວກັບການນຳໃຊ້ທີ່ດິນຕາມປະເພນີ ແລະ ສິດຄອບຄອງທີ່ດິນ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມທີ່ໄດ້ຮັບການຝຶກອົບຮົມແບບໃກ້ຊິດ ສາມາດອະທິບາຍໄດ້ກ່ຽວກັບຂໍ້ມູນພື້ນຖານຂອງກົດໝາຍທີ່ກ່ຽວຂ້ອງກັບບັນຫາການນຳໃຊ້ທີ່ດິນຕາມປະເພນີໃຫ້ແກ່ຊາວບ້ານ ແລະ ເຮັດໃຫ້ສາມາດແກ້ໄຂບັນຫາຂໍ້ຂັດແຍ້ງກ່ຽວກັບທີ່ດິນໄດ້ດີຍິ່ງຂຶ້ນ.

### ການຝຶກອົບເຮັດວຽກຕົວຈິງໃນໝູ່ບ້ານ: ສະໜັບສະໜູນໂດຍຄູຝຶກການຝຶກອົບຮົມແບບໃກ້ຊິດ ຂອງໂຄງການ LIFE

ພາຍຫຼັງໂຄງການ LIFE ຈັດໃຫ້ມີການຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ບັນດາພະນັກງານລັດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ໂຄງການ LIFE ໄດ້ສະໜັບສະໜູນບັນດາຜູ້ເຂົ້າຮ່ວມທີ່ໄດ້ຮັບການຝຶກອົບຮົມແບບໃກ້ຊິດ ເພື່ອກະກຽມວຽກຂອງພວກເຂົາເອງໃນຂັ້ນບ້ານ.

ໃນບາດກ້າວສຸດທ້າຍ, ຜູ້ເຂົ້າຮ່ວມທີ່ໄດ້ຮັບການຝຶກອົບຮົມແບບໃກ້ຊິດນຳພາເຮັດກິດຈະກຳການປູກຈິດສຳນຶກ ຂອງພວກເຂົາເອງໃນຂັ້ນບ້ານ, ຊຶ່ງໄດ້ຮັບການສະໜັບສະໜູນຈາກຄູຝຶກ ຂອງໂຄງການ LIFE ໃນການຝຶກອົບຮົມເຮັດວຽກຕົວຈິງ.

ເນື້ອໃນສຳຄັນທີ່ຊາວບ້ານໄດ້ຮັບການຝຶກອົບຮົມແມ່ນ:

- ມາດຕາ 130 ( ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ) ແລະ



- ມາດຕາ 133 (ສິດຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ), ກົດໝາຍວ່າດ້ວຍທີ່ດິນ ປີ 2019/ ສພຊ,
- ສິດແມ່ຍິງຕໍ່ກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ແລະ
- ບົດບາດຂອງອົງການຈັດຕັ້ງແນວລາວສ້າງຊາດກ່ຽວກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.



*ວຽກຝຶກອົບຮົມແບບໃກ້ຊິດ ທີ່ເມືອງກ່ຽວຂ້ອງ*

ມີຊາວບ້ານເຂົ້າຮ່ວມທັງໝົດ 116 ຄົນ ( ຍິງ 42 ຄົນ) ໄດ້ຮັບການຝຶກອົບຮົມແບບໃກ້ຊິດໃນ 4 ໝູ່ບ້ານ ຢູ່ເມືອງ ຫີນບູນ ແລະ ເມືອງເຊບັ້ງໄຟ. ໃນເມືອງນາກາຍກໍໄດ້ຝຶກອົບ ຮົມຕື່ມອີກສາມໝູ່ບ້ານໃນເດືອນ ພະຈິກ 2021 ໂດຍມີຊາວບ້ານທັງໝົດເຂົ້າຮ່ວມ 288 ຄົນ (ຍິງ 65 ຄົນ).

## ການປະເມີນຜົນດ້ານຜົນກະທົບຂອງການຝຶກອົບຮົມ

ໃນເດືອນ ກຸມພາ 2021, ທີມງານຂອງໂຄງການ LIFE ພ້ອມກັບທີມງານຄູຝຶກຈາກກົມທີ່ດິນຂັ້ນສູນກາງ ແລະ ຜູ້ຕາງໜ້າຈາກ MRLG ໄດ້ດຳເນີນການປະເມີນຜົນເປັນເວລາ 10 ວັນ ກ່ຽວກັບຜົນກະທົບຂອງວຽກຝຶກອົບຮົມແບບໃກ້ຊິດໃຫ້ແກ່ບັນດາອຳນາດການປົກຄອງຂອງລັດຖະບານຕ່າງໆ ໃນຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຊາວບ້ານ. ໂດຍລວມແລ້ວ, ທີມງານປະເມີນຜົນ ໄດ້ສຳພາດ ຜູ້ໄດ້ຮັບການຝຶກອົບຮົມແບບໃກ້ຊິດ 6 ຄົນ ຈາກຂັ້ນສູນກາງ ແລະ ຂັ້ນແຂວງ ແລະ 14 ຄົນຈາກຂັ້ນເມືອງ ກ່ຽວກັບ ຄວາມຮັບຮູ້ຂອງພວກເຂົາຕໍ່ກັບການຝຶກອົບຮົມຂອງໂຄງການ LIFE ແລະ ລະດັບຄວາມເຂົ້າໃຈຂອງພວກເຂົາຕໍ່ກັບເນື້ອໃນການຝຶກອົບຮົມ ແລະ ການນຳໃຊ້ຄວາມຮູ້ຂອງພວກເຂົາ ເພື່ອຈັດຕັ້ງປະຕິບັດກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈໃຫ້ແກ່ຊາວບ້ານ. ທີມງານປະເມີນຜົນໄດ້ດຳເນີນການສຳພາດ ແບບແບ່ງກຸ່ມໂດຍມີຊາວບ້ານຈາກ 7 ໝູ່ບ້ານທີ່ໄດ້ຜ່ານກິດຈະກຳການສ້າງຄວາມຮັບຮູ້ ຄວາມເຂົ້າໃຈຈາກການຈັດຕັ້ງປະຕິບັດການປູກຈິດສຳນຶກຂອງພວກເຂົາກ່ຽວກັບການຝຶກອົບຮົມ ແລະ ການນຳໃຊ້ເນື້ອໃນຂອງກົດໝາຍໃນຊີວິດປະຈຳວັນຂອງພວກເຂົາ.

**ໂດຍລວມແລ້ວ, ທີມງານໂຄງການ LIFE ໄດ້ຝຶກອົບຮົມພະນັກງານລັດທັງໝົດ 52 ຄົນ ໃນ ການຝຶກອົບຮົມແບບໃກ້ຊິດ 4 ຄັ້ງ. ໃນຂັ້ນສູນກາງ (ກົມທີ່ດິນ) ເຫັນວ່າ ຄວາມຮູ້ເພີ່ມຂຶ້ນເຖິງ 32% ຈາກການຝຶກອົບຮົມ. ໃນເມືອງຫີນບູນ, ນາກາຍ ແລະ ເຊບັ້ງໄຟ, ຄວາມຮູ້ເພີ່ມຂຶ້ນເຖິງ 23%, 28% ແລະ 16% ຕາມລຳດັບ.**




***ຄວາມຮູ້ຂັ້ນສູນກາງ ແລະ ຂັ້ນເມືອງກ່ອນ ແລະ ຫຼັງການຝຶກອົບຮົມແບບໃກ້ຊິດ***

### 1) ຂັ້ນສູນກາງ

ເກີນກວ່າເຄິ່ງໜຶ່ງຂອງ ບັນດາຜູ້ເຂົ້າຮ່ວມທີ່ໄດ້ຮັບການຝຶກອົບຮົບແບບໃກ້ຊິດຈາກຂັ້ນສູນກາງ ແມ່ນເຮັດວຽກເປັນຜູ້ອຳນວຍຄວາມສະດວກໃນກິດຈະກຳປູກຈິດສຳນຶກ ກ່ຽວກັບບັນຫາ ການເຊົ່າທີ່ດິນ, ການສຳປະທານທີ່ດິນ, ການຊົດເຊີຍ, ບົດບາດຍິງ-ຊາຍໃນການຄຸ້ມຄອງທີ່ດິນ ແລະ ການແກ້ໄຂຂໍ້ຂັດແຍ້ງ ຊຶ່ງກ່ຽວຂ້ອງກັບພະນັກງານຂະແໜງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ສະນັ້ນ, ເນື້ອໃນການຝຶກອົບຮົມກ່ຽວກັບທັກສະການອຳນວຍຄວາມ ສະດວກ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງກັບການນຳໃຊ້ທີ່ດິນຕາມປະເພນີ ແມ່ນກ່ຽວຂ້ອງກັບວຽກຂອງພວກເຂົາຫຼາຍ.

ຜູ້ໃຫ້ສຳພາດກ່າວວ່າ ການຮຽນຮູ້ກ່ຽວກັບວິທີການວາງແຜນຝຶກອົບຮົມ ເຊັ່ນ BLOOM ຫຼື SMART ເປັນປະໂຫຍດຫຼາຍສຳລັບພວກເຂົາ ເພື່ອພັດທະນາ ການຝຶກອົບຮົມຂອງຕົນເອງ. ການຝຶກອົບຮົມເຮັດວຽກຕົວຈິງ ແລະ ການປະຕິບັດຕົວຈິງກ່ອນການລົງ



ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ LIFE
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
VILLAGE FOCUS INTERNATIONAL
ສະຫະພາບເອີຣົບ European Union
MRLG



ພາກສະໜາມ ເຮັດໃຫ້ພວກເຂົາມີຄວາມໝັ້ນໃຈຍິ່ງຂຶ້ນ ເພື່ອອະທິບາຍເນື້ອໃນຂອງກົດໝາຍໃຫ້ແກ່ບັນດາກຸ່ມເປົ້າໝາຍ. ເນື້ອໃນການຝຶກອົບຮົມຂອງໂຄງການ LIFE ແລະ ເຄື່ອງມືຕ່າງໆ ສາມາດປັບໃຊ້ເຂົ້າກັບສະພາບວຽກຕົວຈິງ ແລະ ວຽກພາກສະໜາມ ໄດ້ດີໃນຂັ້ນບ້ານ ຊຶ່ງຊ່ວຍໃຫ້ພວກເຂົາເຂົ້າໃຈບັນຫາຂອງຊຸມຊົນຢ່າງແທ້ຈິງ. ຖ້າຫາກມີໂອກາດໃນອະນາຄົດ, ບັນດາຜູ້ເຂົ້າຮ່ວມຕ້ອງການເຂົ້າຮ່ວມຝຶກອົບຮົມອີກໃນຫົວຂໍ້ໃໝ່ໆ ທີ່ໂຄງການ LIFE ສາມາດສະໜັບສະໜູນໄດ້. ບັນດາຜູ້ເຂົ້າຮ່ວມທັງໝົດ ມັກຮູບແບບການຝຶກອົບຮົມແບບໃກ້ຊິດ ແລະ ເວົ້າວ່າ ບັນຍາກາດຂອງການຝຶກອົບຮົມ ແມ່ນດີຫຼາຍ, ວິທີການສິດສອນ ແລະ ເຕັກນິກຕ່າງໆຂອງຄູຝຶກ ແມ່ນເໝາະສົມ. ການດຳເນີນການຝຶກອົບຮົມແບບໃກ້ຊິດໃຫ້ແກ່ບັນດາທີມງານຂັ້ນແຂວງ ແລະ ຂັ້ນເມືອງ ຍັງຊ່ວຍສົ່ງເສີມທັກສະການອຳນວຍຄວາມສະດວກ, ສ້າງຄວາມໝັ້ນໃຈດ້ານການເວົ້າໃນທີ່ສາທາລະນະ ແລະ ຄວາມຮູ້ກ່ຽວກັບເນື້ອໃນຂອງກົດໝາຍ. ພວກເຂົາຍັງເຂົ້າໃຈບັນຫາແທ້ຈິງທີ່ບັນດາຜູ້ເຂົ້າຮ່ວມໄດ້ແລກປ່ຽນປະສົບການນຳກັນ.

### 2) ຂັ້ນແຂວງ

ພະນັກງານຂັ້ນແຂວງ ບໍ່ເຄີຍຈັດຕັ້ງປະຕິບັດການຝຶກອົບຮົມໃດໜຶ່ງດ້ວຍຕົນເອງ ພາຍຫຼັງທີ່ພວກເຂົາເຂົ້າຮ່ວມການຝຶກອົບຮົມແບບໃກ້ຊິດຂອງໂຄງການ LIFE. ສິ່ງນີ້ ຍ້ອນວ່າ ໂຄງການ MRLG ຖືກອອກແບບມາ ສຳລັບຂັ້ນເມືອງ ເພື່ອໃຫ້ເປັນຜູ້ຈັດຕັ້ງປະຕິບັດຕົ້ນຕໍ.

ການຝຶກອົບຮົມແບບໃກ້ຊິດຕົວຈິງ ຂອງໂຄງການ LIFE ໃນຂັ້ນບ້ານ ແມ່ນປະສົບການໃໝ່ສຳລັບພະນັກງານຂັ້ນແຂວງ. ຜູ້ໃຫ້ສຳພາດ ກ່າວວ່າ ມັນເປັນປະໂຫຍດຫຼາຍສຳລັບພວກເຂົາໃນການຮຽນຮູ້ກ່ຽວກັບຂະບວນການກະກຽມກິດຈະກຳ, ເຕັກນິກການຕິດຕໍ່ສື່ສານກັບຊາວບ້ານ ແລະ ການເຮັດວຽກເປັນທີມງານ. ພວກເຮົາສາມາດເຫັນໄດ້ວ່າ ວິທີການນີ້ ສົ່ງເສີມໃຫ້ປະຊາຊົນ ສະແດງຄຳຄິດເຫັນຂອງພວກເຂົາຕໍ່ກັບບັນຫາທີ່ດິນ ແລະ ປ່າໄມ້ໃນຊຸມຊົນຂອງພວກເຂົາ.

ຜູ້ໃຫ້ສຳພາດ ໄດ້ຮັບຄວາມຮູ້ໃໝ່ໆ ດັ່ງລຸ່ມນີ້ຈາກການຝຶກອົບຮົມແບບໃກ້ຊິດຂອງໂຄງການ LIFE:

- ບັນດາມາດຕາທີ່ກ່ຽວຂ້ອງກັບທີ່ດິນປະເພນີຂອງກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍຄອບຄົວ.
- ເຄື່ອງມືຈາກການຝຶກອົບຮົມຄູຝຶກ (ToT): ທິດສະດີ ກາດເນີ (Gardner), ເກມໄຍແມງມຸມ ເພື່ອແກ້ໄຂຂໍ້ຂັດແຍ້ງ, ຮູບໂປສເຕີ ເພື່ອອະທິບາຍມາດຕາຕ່າງໆ ຂອງກົດໝາຍ ແລະ ກິດຈະກຳກຸ່ມ.

ບັນດາຜູ້ເຂົ້າຮ່ວມຝຶກອົບຮົມ ຈື່ໄດ້ດີກ່ຽວກັບກົດໝາຍທີ່ກ່ຽວຂ້ອງກັບວຽກປະຈຳວັນຂອງພວກເຂົາ.

ຫຼາຍບົດຮຽນທີ່ເປັນປະໂຫຍດສາມາດນຳໃຊ້ໄດ້ກັບວຽກຕົວຈິງ ແມ່ນ ບົດບາດຂອງແຕ່ລະຝ່າຍທີ່ກ່ຽວຂ້ອງໃນໂຄງການນີ້, ເຊັ່ນ ຂະແໜງທີ່ດິນ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ເນື່ອງຈາກວ່າ ພວກເຂົາໄດ້ຮັບໂອກາດເຂົ້າຮ່ວມໃນການຝຶກອົບຮົມດຽວກັນ ແລະ ແລກປ່ຽນຄວາມຮັບຜິດຊອບໃນກຸ່ມ ແລະ ການປະຕິບັດຕົວຈິງພາກສະໜາມ. ພ້ອມນັ້ນ, ໃນການແກ້ໄຂຂໍ້ຂັດແຍ້ງ, ທັກສະການເປັນຜູ້ອຳນວຍຄວາມສະດວກ ແລະ ເຕັກນິກການເຜີຍແຜ່ຂໍ້ມູນຂ່າວສານ ຍັງເປັນປະໂຫຍດຫຼາຍສຳລັບ ວຽກຂອງພວກເຂົາ. ຜູ້ຕາງໜ້າຈາກອົງການແນວລາວສ້າງຊາດ ກ່າວວ່າ ລາວໄດ້ສະເໜີບົດບັນຍາຍ ແລະ ເຕັກນິກການເວົ້າໃນທີ່ສາທາລະນະໃຫ້ແກ່ກຸ່ມເປົ້າໝາຍໃນສາຍວຽກການຈັດຕັ້ງດຽວກັນ.

ໃນຂະນະທີ່ ບໍ່ມີກິດຈະກຳເພີ່ມຕື່ມ ເພື່ອໃຫ້ພະນັກງານຂັ້ນແຂວງຈັດຕັ້ງປະຕິບັດ ພາຍຫຼັງການຝຶກອົບຮົມແບບໃກ້ຊິດ, ຜູ້ໃຫ້ສຳພາດບໍ່ສາມາດຈື່ໄດ້ກ່ຽວກັບວິທີການນຳພາກິດຈະກຳຕ່າງໆ ໃນຂັ້ນບ້ານເນື່ອງຈາກວ່າ ພວກເຂົາບໍ່ມີໂອກາດທີ່ຈະໄດ້ປະຕິບັດຕົວຈິງຕື່ມ ແລະ ສະນັ້ນ, ຈຶ່ງລືມບາງເນື້ອໃນທີ່ໄດ້ຝຶກອົບຮົມແບບໃກ້ຊິດ ຈາກໂຄງການ LIFE.

### 3) ຂັ້ນເມືອງ

ມີຜົນໄດ້ຮັບທີ່ປະສົມປະສານກັນຢູ່ສາມເມືອງ, ພ້ອມນັ້ນ, ກໍຍັງຂຶ້ນກັບວ່າ ຫ້ອງການຕ່າງໆ ເຊັ່ນ ສະຫະພັນແມ່ຍິງລາວ, ແນວລາວສ້າງຊາດ, ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ, ຫ້ອງການຊັບພະຍາກອນ ແລະ ສິ່ງແວດລ້ອມ ເມືອງ ສາມາດເຮັດວຽກຮ່ວມກັນໄດ້. ໂດຍທົ່ວໄປແລ້ວ, ສາມເມືອງ ໄດ້ຮັບຄວາມຮູ້ຫຼາຍຂຶ້ນກ່ຽວກັບເນື້ອໃນຂອງກົດໝາຍ ທີ່ກ່ຽວຂ້ອງຈາກການຝຶກອົບຮົມແບບໃກ້ຊິດ ແຕ່ກໍບໍ່ແນ່ໃຈວ່າຈະນຳໃຊ້ວິທີການຝຶກອົບຮົມແນວໃດ ແລະ ກ່າວວ່າ ໃຊ້ເວລາດົນແລ້ວທີ່ບໍ່ໄດ້ນຳໃຊ້ຄວາມຮູ້ຈາກການຝຶກອົບຮົມ. ໂດຍລວມແລ້ວ, ມີຄວາມສາມາດ ແລະ ຄວາມໝັ້ນໃຈໃນການເວົ້າຕໍ່ໜ້າຜູ້ຟັງຫຼາຍຂຶ້ນ.



*ຮູບພາບກຸ່ມຂອງທີມງານປະເມີນຜົນ ທີ່ບ້ານກົກຕ້ອງ ແລະ ຖ້ຳລາຍ*

**ເມືອງຫີນບູນ**

ຮອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຊສ) ເມືອງຫີນບູນ ເຂົ້າໃຈເຖິງ ການຮັບຮູ້ສິດຂອງປະຊາຊົນໃນ ໂຄງການຮັບຮູ້ສິດໃນເຂດປ່າສາມປະເພດເປັນຢ່າງດີ ເນື່ອງຈາກໂຄງການນີ້ ເປັນປະໂຫຍດຫຼາຍ ເພື່ອສ້າງຖານຂໍ້ມູນໃນຂົງເຂດກະສິກຳ, ໂດຍສະເພາະ ເນື້ອທີ່ດິນກະສິກຳທີ່ຕັ້ງຢູ່ໃນ ເຂດປ່າສະຫງວນແຫ່ງຊາດ. ລາວຍັງເວົ້າວ່າ ພະນັກງານຂອງ ຂະແໜງ ຊສ ຂັ້ນເມືອງທີ່ໄດ້ເຂົ້າຮ່ວມໂຄງການນີ້ ສາມາດສືບຕໍ່ຈັດຕັ້ງປະຕິບັດການຈັດສັນທີ່ດິນ ແລະ ແບ່ງເຂດທີ່ດິນດ້ວຍຕົນເອງ ໃນກໍລະນີມີງົບປະມານ. ເຖິງຢ່າງໃດກໍຕາມ, ລາວບໍ່ສາມາດອະທິບາຍໄດ້ກ່ຽວກັບກິດຈະກຳການປູກຈິດສຳນຶກ. ລາວພຽງແຕ່ເວົ້າວ່າ ພະນັກງານຂອງຂະແໜງ ຊສ ຂັ້ນເມືອງ ໄດ້ຮຽນຮູ້ກ່ຽວກັບທັກສະທີ່ດີ ເພື່ອເຜີຍແຜ່ຂໍ້ມູນໃຫ້ແກ່ຊາວບ້ານ ຫຼັງຈາກໄດ້ເຂົ້າຮ່ວມການຝຶກອົບຮົມແບບໃກ້ຊິດນຳຂອງໂຄງການ LIFE.

ຜູ້ໃຫ້ສຳພາດ ຈາກທີມງານເຕັກນິກວິຊາການຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງຫີນບູນ ເວົ້າພຽງແຕ່ ຊື່ຂອງເຄື່ອງມືຕ່າງໆ ເຊັ່ນ SMART, PMI, BLOOM, GARDNER, ຊື່ຂອງ ໂປສເຕີ ແລະ ເກມຕ່າງໆ, ແຕ່ບໍ່ສາມາດອະທິບາຍຈະແຈ້ງກ່ຽວກັບການນຳໃຊ້ເຄື່ອງມືເຫຼົ່ານີ້.

ສຳລັບກົດໝາຍຕ່າງໆ ທີ່ບັນຍາຍໃນການຝຶກອົບຮົມແບບໃກ້ຊິດນັ້ນ, ພະນັກງານສາມາດຈື່ຈຳໄດ້ບັນຫາດັ່ງຕໍ່ໄປນີ້:

- ບົດບາດຍິງ-ຊາຍ ແລະ ຄວາມກ່ຽວຂ້ອງກັນກັບບັນຫາທີ່ດິນ;
- ສິດຂອງແມ່ຍິງໃນທີ່ດິນ ແລະ ໃບຕາດິນ;
- ບົດບາດຂອງອົງການຈັດຕັ້ງແນວລາວສ້າງຊາດ.

ມີພຽງແຕ່ຄົນດຽວຈາກສີ່ຄົນ ທີ່ກ່າວວ່າ ລາວໝັ້ນໃຈທີ່ຈະເຜີຍແຜ່ຄວາມຮູ້ໃນຂັ້ນບ້ານ ໃນຂະນະທີ່ ຜູ້ໃຫ້ສຳພາດກ່າວວ່າ ເນື້ອໃນແມ່ນຍາກ ແລະ ພວກເຂົາຢ້ານທີ່ຈະເຮັດຜິດໃນການເຜີຍແຜ່.

ທີມງານຂັ້ນເມືອງ ກ່າວວ່າ ຈາກການຝຶກອົບຮົມແບບໃກ້ຊິດໃນຂັ້ນບ້ານ, ຊາວບ້ານ ຮັບຮູ້ວ່າ ໃບຕາດິນ ສາມາດອອກໃຫ້ໄດ້ສຳລັບທີ່ດິນກະສິກຳ. ການຄຸ້ມຄອງທີ່ດິນປ່າສາມປະເພດ ແມ່ນບັນຫາໃໝ່ ສຳລັບຫຼາຍຄົນ ແລະ ເປັນຄັ້ງທຳອິດສຳລັບບັນດາຜູ້ເຂົ້າຮ່ວມຝຶກອົບຮົມທີ່ຮຽນຮູ້ກ່ຽວກັບມາດຕາຕ່າງໆ ຂອງກົດໝາຍທີ່ກ່ຽວຂ້ອງກັບປ່າສາມປະເພດ. ພວກເຂົາກ່າວວ່າ ການຝຶກອົບຮົມແບບໃກ້ຊິດນີ້ ຊ່ວຍໃຫ້ພວກເຂົາເຂົ້າໃຈດີກ່ຽວກັບປ່າທີ່ຖືກປົກປ້ອງ ເນື່ອງຈາກວ່າ ເມືອງ ແມ່ນຕັ້ງຢູ່ໃນປ່ານີ້. ພ້ອມນັ້ນ, ຜູ້ໃຫ້ສຳພາດຫຼາຍຄົນ ຍັງສາມາດອະທິບາຍກ່ຽວກັບສິດນຳໃຊ້ທີ່ດິນຕາມປະເພນີໄດ້.

**ເມືອງ ເຊບັ້ງໄຟ**

ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແມ່ນຍັງໃໝ່ຫຼາຍ ແລະ ເຮັດວຽກໃນຫ້ອງການນີ້ໄດ້ພຽງແຕ່ 2-3 ເດືອນເທົ່ານັ້ນ, ສະນັ້ນ, ລາວບໍ່ສາມາດໃຫ້ຂໍ້ມູນສະເພາະກ່ຽວກັບໂຄງການໄດ້ ແລະ ບໍ່ຮູ້ຫຼາຍກ່ຽວກັບວຽກງານການປູກຈິດສຳນຶກຂອງໂຄງການ.

ພາຍຫຼັງສຳເລັດການຝຶກອົບຮົມແບບໃກ້ຊິດ ທີ່ທົດລອງໃນຂັ້ນບ້ານກັບໂຄງການ LIFE ໃນເດືອນ ມິຖຸນາ 2020 ແລ້ວ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຫ້ອງການດຽວ ໄດ້ຈັດຕັ້ງປະຕິບັດກິດຈະກຳການປູກຈິດສຳນຶກທີ່ບ້ານ.
ກົກຕ້ອງ ແລະ ບ້ານຖ້ຳລາຍ ໂດຍບໍ່ໄດ້ເຊີນສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດເຂົ້າຮ່ວມນຳ. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຮັບຜິດຊອບໃນການອະທິບາຍທຸກຫົວຂໍ້ກວມເອົາໜ້າວຽກຂອງ ແນວລາວສ້າງຊາດ ແລະ ສະຫະພັນແມ່ຍິງລາວ. ອີງຕາມການສົນທະນາກັບຜູ້ໃຫ້ສຳພາດ, ກິດຈະກຳຕ່າງໆ ແມ່ນເຮັດຜ່ານການອະທິບາຍປາກເປົ່າເອົາເທົ່ານັ້ນ ໂດຍບໍ່ໄດ້ໃຊ້ເຄື່ອງມືຈາກການຝຶກອົບຮົມແບບໃກ້ຊິດ.

ໃນເມືອງເຊບັ້ງໄຟ, ທີມງານປະເມີນຜົນ ໄດ້ສຳພາດ ບັນດາຜູ້ເຂົ້າຮ່ວມການຝຶກອົບຮົມ 5 ຄົນ (ຍິງ 2 ຄົນ) ຈາກ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ. ສະເພາະແຕ່ຜູ້ໃຫ້ສຳພາດຈາກຫ້ອງການຊັບພະຍາກອນທຳ

ມະຊາດ ແລະ ສິ່ງແວດລ້ອມເມືອງ ໄດ້ເຮັດກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈໃນຂັ້ນບ້ານພາຍຫຼັງການຝຶກອົບຮົມແບບໃກ້ຊິດຈາກໂຄງການ LIFE.

- ຄວາມເຊື່ອໝັ້ນໃນກິດຈະກຳການສ້າງຈິດສຳນຶກແມ່ນມີສູງ ເນື່ອງຈາກວ່າ ມັນເປັນວຽກປົກກະຕິຂອງຜູ້ໃຫ້ສຳພາດ;
- ພາຍຫຼັງການຝຶກອົບຮົມແບບໃກ້ຊິດ, ທັກສະການສື່ສານກັບ ຊາວບ້ານ ແມ່ນໄດ້ດີຂຶ້ນ;
- ຄວາມຮູ້ກ່ຽວກັບກົດໝາຍຕ່າງໆ ທີ່ກ່ຽວຂ້ອງ ກໍເພີ່ມຂຶ້ນ.

**ເມືອງນາກາຍ**

ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ນາກາຍ ເຂົ້າໃຈກ່ຽວກັບໂຄງການ ແລະ ວຽກກິດຈະກຳການປູກຈິດສຳນຶກໄດ້ດີຫຼາຍ ແລະ ສາມາດອະທິບາຍໄດ້ເປັນຢ່າງດີ ກ່ຽວກັບຂີດຄວາມສາມາດຂອງພະນັກງານໃນຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຊຶ່ງໄດ້ຮັບການປັບປຸງໃຫ້ດີຂຶ້ນຫຼາຍ ນັບແຕ່ໄດ້ເຂົ້າຮ່ວມການຝຶກອົບຮົມແບບໃກ້ຊິດຈາກໂຄງການ LIFE. ພະນັກງານຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ໄດ້ນຳໃຊ້ເຄື່ອງມື ແລະ ວິທີການໃໝ່ (ວີດີໂອ, ຮູບໂປສເຕີ, ຫຼິ້ນເກມ) ເມື່ອເຜີຍແຜ່ຂໍ້ມູນໃຫ້ແກ່ຊາວບ້ານ. ລາວຍັງເນັ້ນໜັກໃຫ້ເຫັນວ່າ ພະນັກງານຂອງຕົນ ແມ່ນມີຄວາມໝັ້ນໃຈຫຼາຍຂຶ້ນໃນການເປັນຜູ້ອຳນວຍຄວາມສະດວກ ແລະ ຄວາມສາມາດຂອງພວກເຂົາກໍເພີ່ມຂຶ້ນໃນດ້ານການເວົ້າຕໍ່ໜ້າຜູ້ຟັງ.

ເມືອງນີ້ ສຳເລັດກິດຈະກຳການປູກຈິດສຳນຶກແມ່ນສຳເລັດໃນເດືອນພະຈິກ 2020 ແລະ ສືບຕໍ່ການສຳຫຼວດກ່ຽວກັບທີ່ດິນ ແລະ ປ່າໄມ້ ແລະ ການແບ່ງເຂດແດນ.

ທີມງານເມືອງນາກາຍ ມີຄວາມພ້ອມໃນການຈັດຕັ້ງປະຕິບັດວຽກງານປູກຝັງຈິດສຳນຶກ ຊຶ່ງມີປະສົບການ ສາມາດເຮັດວຽກເປັນທີມ ແລະ ນຳໃຊ້ທຸກວິທີການ ແລະ ເຄື່ອງມືຈາກ ການຝຶກອົບຮົມແບບໃກ້ຊິດນຳຂອງໂຄງການ LIFE. ທີມງານ ເມືອງນາກາຍ ແມ່ນສາມາດແລກປ່ຽນຄວາມຮັບຜິດຊອບ ແລະ ໜ້າວຽກຕ່າງໆ ໄດ້.

**4) ຂັ້ນບ້ານ**

ທີມງານປະເມີນຜົນໄດ້ສຳພາດຊາວບ້ານແບບເປັນກຸ່ມຄື: ມີກຸ່ມອຳນາດການປົກຄອງບ້ານ, ກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ ທີ່ຈະຖືກສຳພາດ. ການປະເມີນຜົນ ແມ່ນດຳເນີນການໃນເມືອງຫີນບູນ, ເຊບັ້ງໄຟ ແລະ ເມືອງນາກາຍ, ຈຳນວນ 7 ໝູ່ບ້ານ. 3 ບ້ານໃນນີ້ ແມ່ນສ່ວນໜຶ່ງຂອງການຝຶກອົບຮົມແບບໃກ້ຊິດຂອງໂຄງການ LIFE ໃນເດືອນ ກໍລະກົດ 2020, ໃນຂະນະທີ່ 4 ບ້ານທີ່ສຳພາດ ແມ່ນສ່ວນໜຶ່ງຂອງວຽກກິດຈະກຳການປູກຈິດສຳນຶກຂອງພາກລັດ.



*ຊີວິດການເປັນຢູ່ຂອງຊາວບ້ານໃນພື້ນທີ່ບໍລິເວນໂຄງການໃນແຂວງຄຳມ່ວນ*

**ຄຳຄິດເຫັນ ແລະ ຄຳຖາມທີ່ເກັບກຳໄດ້ຈາກຊາວບ້ານໃນລະຫວ່າງ ການປະເມີນຜົນ ແລະ ການຝຶກອົບຮົມ**

1) ຊາວບ້ານ ແມ່ນກັງວົນກ່ຽວກັບດິນມູນເດີມທີ່ພວກເຂົານຳໃຊ້ແຕ່ບັນພະບູລຸດ, ແຕ່ເມື່ອ ກົດໝາຍວ່າດ້ວຍປ່າໄມ້ ອອກມາ, ປັດຈຸບັນ ຊາວບ້ານ ຕົກຢູ່ໃນການອາໄສຢູ່ໃນພື້ນທີ່ບໍລິເວນທີ່ດິນປ່າໄມ້. ພວກເຂົາອາໄສຢູ່ໃນປ່າໄມ້ ແລະ ນຳໃຊ້ປ່າໄດ້ຢ່າງຖືກຕ້ອງຕາມກົດໝາຍບໍ? ພວກເຂົາຈະເຮັດແນວໃດ?

2) ດິນບາງຕອນທີ່ເປັນຂອງບຸກຄົນ ກໍມີໃບຕາດິນຖາວອນແລ້ວ, ຈະເກີດຫຍັງຂຶ້ນຕໍ່ກັບການຮັບຮູ້ສິດນຳໃຊ້ທີ່ດິນ ເມື່ອຕອນດິນເຫຼົ່ານັ້ນ ແມ່ນຕົກຢູ່ໃນພື້ນທີ່ບໍລິເວນປ່າປ້ອງກັນ ຫຼື ສະຫງວນໄວ້ໃນປັດຈຸບັນ?

3) ຄວາມແຕກຕ່າງລະຫວ່າງ ສິດນຳໃຊ້ທີ່ດິນຖາວອນ ແລະ ສິດນຳໃຊ້ຊົ່ວຄາວ? ເຮົາຊິເຮັດຫຍັງໄດ້ແດ່ ກັບສິດເຫຼົ່ານີ້?

4) ມາດຖານເງື່ອນໄຂເພື່ອກຳນົດປ່າສາມປະເພດ ຄື ປ່າຜະລິດ, ປ່າປ້ອງກັນ ແລະ ປ່າສະຫງວນ ແມ່ນຫຍັງ?

5) ຖ້າເປັນໄປໄດ້, ບ້ານຕ້ອງການຂະຫຍາຍດິນນາ ແລະ ຂໍຮ້ອງໃຫ້ມີທີ່ດິນເພື່ອທຳການຜະລິດເພີ່ມຕື່ມ. ບາງສ່ວນຂອງປ່າຜະລິດ ຄວນຫັນປ່ຽນມາເປັນທີ່ດິນກະສິກຳ, ເປັນໄປໄດ້ບໍ?



6) ນອກຈາກວຽກກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈ, ທີມງານຂັ້ນເມືອງ ຄວນສຳເລັດການສຳຫຼວດ ແລະ ການແບ່ງເຂດດິນທີ່ເປັນດິນກະສິກຳ ແລະ ພື້ນທີ່ພູພຽງ ແລະ ວຽກອື່ນໆ ທີ່ກ່ຽວຂ້ອງກັບໂຄງການຕົວແບບ ຄວນສືບຕໍ່ໃຫ້ສຳເລັດທຸກຂັ້ນຕອນ.

7) ວຽກກິດຈະກຳປູກຈິດສຳນຶກ ຄວນໃຫ້ມີເຄື່ອງມືທີ່ເບິ່ງເຫັນໄດ້ ເຊັ່ນ ຮູບພາບ ແລະ ວີດີໂອ.

8) ຊາວບ້ານ ຕ້ອງການໃຫ້ມີ ຮູບໂປສເຕີຕິດໄວ້ໃນບ້ານ ເພື່ອໃຫ້ພວກເຂົາສາມາດອ່ານ/ນຳໃຊ້ ເມື່ອຕ້ອງການ.

9) ທີມງານຂັ້ນເມືອງ ຄວນໃຊ້ເວລາໜຶ່ງວັນ ເພື່ອເຮັດວຽກກິດຈະກຳປະຊາສຳພັນ, ພຽງ 2-3 ຊົ່ວໂມງ ແມ່ນບໍ່ພຽງພໍ.

10) ຊາວບ້ານບາງຄົນທີ່ມີດິນຫຼາຍຕອນ, ອຳນາດການປົກຄອງເມືອງ ຄວນຈຳກັດຈຳນວນຕອນດິນຂອງພວກເຂົາ. ເວລາດຳເນີນການສຳຫຼວດ, ຄວນຕ້ອງຈະແຈ້ງວ່າບຸກຄົນສາມາດເປັນເຈົ້າຂອງດິນໄດ້ຈັກຕອນ ແລະ ການນຳໃຊ້ທີ່ດິນແຕ່ລະປະເພດ.

11) ຄ່າທຳນຽມໃນການອອກໃບຕາດິນ ແມ່ນສູງຫຼາຍ, ສະນັ້ນ, ຊາວບ້ານບໍ່ສາມາດຈ່າຍໄດ້.

*ເມືອງຫີນບູນ (ໜຶ່ງບ້ານໄດ້ຮັບການຝຶກອົບຮົມແບບໃກ້ຊິດ ພາຍໃຕ້ໂຄງການ, ໜຶ່ງບ້ານ ແມ່ນໄດ້ຮັບການຝຶກອົບຮົມຈາກພາກລັດ)*

***ອຳນາດການປົກຄອງບ້ານ***

ກຸ່ມນີ້ ເຂົ້າໃຈຈຸດປະສົງຂອງໂຄງການຂ້ອນຂ້າງດີ ແລະ ພວກເຂົາສາມາດສະໜອງຂໍ້ມູນທີ່ດີກ່ຽວກັບສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ໃນບ້ານ ນັບແຕ່ 5 ປີຜ່ານມາ ຈົນຮອດປັດຈຸບັນ. ພວກເຂົາກ່າວວ່າ ໂຄງການນີ້ ເປັນປະໂຫຍດຫຼາຍ ເພາະວ່າ ມັນໄດ້ຊ່ວຍໃຫ້ແກ້ໄຂບັນຫາຂໍ້ຂັດແຍ້ງທີ່ດິນໃນບ້ານ ແລະ ຊາວບ້ານ ກໍເຂົ້າໃຈກ່ຽວກັບປ່າແຕ່ລະປະເພດ. ກ່ອນໜ້າໂຄງການນີ້, ອຳນາດການປົກຄອງບ້ານ ບໍ່ຮູ້ວ່າ ບ້ານຕັ້ງຢູ່ໃນເຂດພື້ນທີ່ປ່າສະຫງວນແຫ່ງຊາດ.

***ກຸ່ມແມ່ຍິງ***

ກຸ່ມແມ່ຍິງ ສ່ວນໃຫຍ່ແມ່ນຍັງບໍ່ຈະແຈ້ງກ່ຽວກັບໂຄງການ ແລະ ຈຸດປະສົງຂອງໂຄງການ, ແມ່ຍິງບາງຄົນ ເຂົ້າໃຈວ່າ ໂຄງການ ແມ່ນເພື່ອອອກໃບຕາດິນ. ເຖິງຢ່າງນັ້ນກໍຕາມ, ພວກເຂົາຍັງຈື່ບົດຮຽນຈາກການຝຶກອົບຮົມໄດ້ດີ ແລະ ຍົກຄຳຖາມທີ່ໜ້າສົນໃຈ. ພວກເຂົາຍັງສາມາດອະທິບາຍຄວາມສຳຄັນໃນການມີສ່ວນຮ່ວມຂອງແມ່ຍິງຢູ່ໃນການຄຸ້ມຄອງທີ່ດິນໃນບ້ານ ແລະ ເຂົ້າໃຈຄວາມສຳຄັນຂອງວຽກກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈ. ນອກຈາກນັ້ນ, ພວກເຂົາຍັງໄດ້ຕັ້ງຄຳຖາມກ່ຽວກັບຄວາມສຳຄັນຂອງການມີຊື່ແມ່ຍິງຢູ່ໃນໃບຕາດິນ ແລະ ບອກທີມງານປະເມີນຜົນວ່າ ພວກເຂົາຕ້ອງການໃຫ້ທີມງານຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອໃຫ້ເຜີຍແຜ່ຂໍ້ມູນກ່ຽວກັບບັນຫາທີ່ຕິດພັນກັບທີ່ດິນ ແລະ ພວກເຂົາກໍຕ້ອງການໃຫ້ມີ ຮູບໂປສເຕີສຳລັບຕິດຢູ່ບ້ານ. ພວກເຂົາງຂໍໃຫ້ທີມງານຂັ້ນເມືອງ ເພື່ອຈັດກິດຈະກຳການປູກຈິດສຳນຶກໃຫ້ຫຼາຍຂຶ້ນຢ່າງເປັນປົກກະຕິ.

***ກຸ່ມຜູ້ຊາຍ***

ທີມງານປະເມີນຜົນ ຖາມກຸ່ມຜູ້ຊາຍ ເພື່ອແຕ້ມແຜນທີ່ຂອງຕອນດິນ ແລະ ການນຳໃຊ້ປ່າພາຍໃນຂອບເຂດຊາຍແດນບ້ານທີ່ທີມງານຂັ້ນເມືອງໄດ້ດຳເນີນການສຳຫຼວດທີ່ດິນ. ຜູ້ຊາຍບໍ່ເຂົ້າໃຈວຽກງານປະຊາສຳພັນ ເພາະວ່າ ມີພຽງບາງຄົນທີ່ໄດ້ເຂົ້າຮ່ວມກິດຈະກຳຢູ່ບ້ານວຽງທອງ ແລະ ບໍ່ໄດ້ແຈ້ງໃຫ້ຊາວບ້ານຜູ້ອື່ນໆ ເມື່ອພວກເຂົາກັບຄືນບ້ານ. ກຸ່ມຜູ້ຊາຍ ແມ່ນຮັບຮູ້ດີກ່ຽວກັບ ຂໍ້ຂັດແຍ້ງທີ່ດິນໃນຂອບເຂດຊາຍແດນ ແລະ ພື້ນທີ່ບໍລິເວນທີ່ເຊື່ອມຈອດກັນ. ເມື່ອທີມງານຂັ້ນເມືອງ ໄດ້ມາເຮັດວຽກທີ່ບ້ານ ໂພນດີ, ພວກເຂົາ ເຮັດແຕ່ການສຳຫຼວດທີ່ດິນເທົ່ານັ້ນ ແລະ ບໍ່ໄດ້ເຮັດວຽກປະຊາສຳພັນ .

*ເມືອງເຊບັ້ງໄຟ (ສອງບ້ານ ແມ່ນສ່ວນໜຶ່ງຂອງການຝຶກອົບຮົມເຮັດວຽກຕົວຈິງຂອງໂຄງການ LIFE ໃນເດືອນ ກໍລະກົດ 2020)*

***ກຸ່ມແມ່ຍິງ***

ຜູ້ໃຫ້ສຳພາດ 5 ຄົນ ມີຄວາມກະຕືລືລົ້ນໃນການເຂົ້າຮ່ວມ ຕອບຄຳຖາມຕ່າງໆ ໃນຂະນະທີ່ ທີມງານຂັ້ນສູນກາງ ແລະ ຂັ້ນແຂວງ ເຮັດວຽກຮ່ວມກັນເພື່ອຊອກຫາວິທີທາງຊຸກຍູ້ໃຫ້ ແມ່ຍິງໄດ້ປະກອບຄຳເຫັນ. ໂດຍລວມແລ້ວ, ແມ່ຍິງເຂົ້າໃຈກ່ຽວກັບວຽກຂອງໂຄງການ ແລະ ພວກເຂົາຮູ້ໄດ້ເຖິງຄວາມສຳຄັນຂອງໂຄງການທີ່ດິນ, ການນຳໃຊ້ທີ່ດິນກະສິກຳ, ຊື່ຂອງແມ່ຍິງໃນໃບຕາດິນ. ພວກເຂົາຍັງຈື່ໄດ້ເຖິງ 5 ສິດຂອງຜູ້ຖືຄອງທີ່ດິນ, ສິດການນຳໃຊ້ທີ່ດິນຕາມປະເພນີເກີນກວ່າ 20 ປີ. ແມ່ຍິງຍັງຮູ້ວ່າ ຈະເຮັດແນວໃດໃຫ້ແມ່ຍິງ ແລະ ອຳນາດການປົກຄອງບ້ານ ສາມາດປົກປ້ອງສິດນຳໃຊ້ທີ່ດິນຂອງແມ່ຍິງ.

***ກຸ່ມຜູ້ຊາຍ***

ຈາກການສົນທະນາ, ຜູ້ເຂົ້າຮ່ວມ ສາມາດຈື່ໄດ້ບາງບົດຮຽນ ເຊັ່ນວ່າ ພວກເຂົາສາມາດຕອບໄດ້ວ່າ ປະຊາຊົນລາວ ມີ 5 ສິດພື້ນຖານໃນການນຳໃຊ້ທີ່ດິນ. ຜູ້ຊາຍ ຍັງສາມາດເຂົ້າໃຈໄດ້ວ່າ ສິດການນຳໃຊ້ທີ່

ດິນຕາມປະເພນີ ໃນຮູບແບບທີ່ພວກເຂົາໄດ້ນຳໃຊ້ມາ ແຕ່ສະໄໝບັນພະບູລຸດຂອງພວກເຂົາ. ໃນດ້ານການປົກປ້ອງສິດນຳໃຊ້ທີ່ດິນຂອງແມ່ຍິງ, ກຸ່ມຜູ້ຊາຍ ຂໍໃຫ້ແມ່ຍິງ ໃຊ້ສິດສຽງເພື່ອຕົນເອງ ອີງຕາມຂໍ້ກຳນົດຂອງກົດໝາຍ. ຜ່ານມາ, ແມ່ຍິງ ມັກຈະປ່ອຍໃຫ້ຜົວຂອງພວກເຂົາຕັດສິນໃຈ.

ກຸ່ມຜູ້ຊາຍ ຂໍໃຫ້ທີມງານ ເພື່ອຈັດກິດຈະກຳປະຊາສຳພັນ ພ້ອມກັບເຄື່ອງມືການໂຄສະນາ. ພວກເຂົາຂໍໃຫ້ໄດ້ຮັບປື້ມຄູ່ມືກິດຈະກຳປະຊາສໍພັນ ຊຶ່ງພວກເຂົາສາມາດນຳໃຊ້ ເພື່ອເຜີຍແຜ່ຂໍ້ມູນໃຫ້ແກ່ຊາວບ້ານ ແລະ ສຶກສາອົບຮົມໃຫ້ພວກເຂົາກ່ຽວກັບສິດນຳໃຊ້ທີ່ດິນ. ຊາວບ້ານ ຍັງຂໍໃຫ້ທີມງານຂັ້ນເມືອງ ດຳເນີນການຈັດສັນແບ່ງເຂດທີ່ດິນໃຫ້ສຳເລັດ.

*ເມືອງນາກາຍ (ທຸກບ້ານແມ່ນໄດ້ຮັບກິດຈະກຳການປູກຈິດສຳນຶກ ຫຼື ປະຊາສຳພັນ ຈາກທີມງານຂອງພາກລັດ)*

### ***ກຸ່ມແມ່ຍິງ***

ແມ່ຍິງສາມາດອະທິບາຍບົດຮຽນ ແລະ ກິດຈະກຳຕ່າງໆ ທີ່ໄດ້ເຮັດສຳເລັດ ໂດຍທີມງານຂັ້ນເມືອງ. ພວກເຂົາຈື່ໄດ້ວ່າ ມີຜູ້ຕາງໜ້າຈາກສະຫະພັນແມ່ຍິງ ເພາະວ່າ ລາວສາມາດອະທິບາຍໄດ້ດີຫຼາຍ, ສຽງດັງ ແລະ ຈະແຈ້ງ, ຊຶ່ງຍົກສູງຄວາມຮັບຮູ້ກ່ຽວກັບສິດຂອງແມ່ຍິງໃນເລື່ອງທີ່ດິນ, ສິດການນຳໃຊ້ທີ່ດິນຕາມປະເພນີ, ແລະ ການລະບຸໜ່ວຍງານການປົກປ້ອງແມ່ຍິງ. ແມ່ຍິງ ແມ່ນສະໜັບສະໜູນສົ່ງເສີມກັນ ເພື່ອຕອບຄຳຖາມ, ແລະ ຈື່ໄດ້ດີກ່ຽວກັບຊື່ຂອງແມ່ຍິງໃນໃບຕາດິນ. ພ້ອມນັ້ນ, ທີມງານ ກໍໄດ້ໃຫ້ຄວາມຮູ້ກ່ຽວກັບສິດນຳໃຊ້ທີ່ດິນ, ສິດການນຳໃຊ້ທີ່ດິນຕາມປະເພນີ, ແລະ ການລະບຸໜ່ວຍງານການປົກປ້ອງແມ່ຍິງ. ພາຍຫຼັງສຳເລັດການສຳພາດ, ແມ່ຍິງ ບອກໃຫ້ທີມງານວ່າ ພວກເຂົາຕ້ອງການເບິ່ງວີດີໂອ, ຮູບພາບຊີວິດການເປັນຢູ່ຂອງບ່ອນອື່ນໆ ທີ່ອາດຈະໜ້າສົນໃຈ ແລະ ມີການສົນທະນາກ່ຽວກັບຫົວຂໍ້ກ່ຽວຂ້ອງກັບທີ່ດິນ.



*ທີມງານຂອງສະຫະພັນແມ່ຍິງລາວ ໄດ້ເຮັດກິດຈະກຳການປູກຈິດສຳນຶກໃຫ້ແກ່ກຸ່ມແມ່ຍິງໃນເມືອງຫີນບູນ*

### ***ກຸ່ມຜູ້ຊາຍ***

ການປຶກສາຫາລືກຸ່ມ ແມ່ນສຸມໃສ່ຄວາມເຂົ້າໃຈກ່ຽວກັບໂຄງການ, ແຕ່ພວກເຂົາບໍ່ຈື່ ຊື່ໂຄງການ ແລະ ບໍ່ໝັ້ນໃຈທີ່ຈະຕອບ. ບາງຄົນເວົ້າວ່າ ໂຄງການນີ້ ອອກໃບຕາດິນ.

ບັນດາຜູ້ໃຫ້ສຳພາດ ສາມາດຈື່ວຽກກິດຈະກຳປະຊາສຳພັນທີ່ໄດ້ຈັດຂຶ້ນໂດຍທີມງານຂັ້ນເມືອງ. ພວກເຂົາຍັງເຂົ້າໃຈ ເຖິງເນື້ອໃນສຳຄັນຂອງບົດຮຽນ ຊຶ່ງລວມມີ: ສິດນຳໃຊ້ທີ່ດິນຕາມປະເພນີ, ສິດການຄອບຄອງທີ່ດິນ, ການມີສ່ວນຮ່ວມຂອງແມ່ຍິງໃນການນຳໃຊ້ທີ່ດິນ. ພວກເຂົາຍັງສາມາດສົ່ງຕໍ່ຄວາມຮູ້ ທີ່ພວກເຂົາໄດ້ຮຽນມາຈາກທີມງານຂັ້ນເມືອງ ໃຫ້ແກ່ຜູ້ອື່ນໆ ໄດ້. ກຸ່ມຜູ້ຊາຍ ຍັງສາມາດບອກໄດ້ເຖິງລາຍລະອຽດຂອງວຽກກິດຈະກຳການປູກຈິດສຳນຶກ ເນື່ອງຈາກວ່າ ທີມງານຂັ້ນເມືອງ ໄດ້ນຳໃຊ້ເຄື່ອງມືຫຼາຍອັນທີ່ເປັນສື່ປະຈັກຕາເຊັ່ນ: ວີດີໂອກ່ຽວກັບຂະບວນການອອກໃບຕາດິນ, ໂປສເຕີ ແລະ ເອກະສານຕ່າງໆ. ກິດຈະກຳການປູກຈິດສຳນຶກ ຊ່ວຍໃຫ້ຊາວບ້ານເຂົ້າໃຈສະພາບເງື່ອນໄຂຂອງບ້ານໃນອະດີດທີ່ອຸດົມສົມບູນໄປດ້ວຍສັດປ່າ, ຕົ້ນໄມ້ໃຫຍ່, ອາກາດດີ. ຫວ່າງບໍ່ດົນມານີ້, ສະພາບດິນຟ້າອາກາດ ແລະ ສະພາບແວດລ້ອມປ່ຽນແປງໄປ.



*ກິດຈະກຳສ້າງຄວາມຄຸ້ນເຄີຍທີ່ ບ້ານ ໂພນທອງ*

**ຄຳແນະນຳ ແລະ ທິດທາງຕໍ່ໜ້າ**

**ລະດັບຜູ້ໃຫ້ທຶ MRLG**

- ຄູ່ຮ່ວມມືໃນການຈັດຕັ້ງປະຕິບັດໂຄງການນີ້ ແມ່ນ ກົມທີ່ດິນ, ໂດຍໄດ້ຮັບທຶນສະໜັບສະໜູນຈາກໂຄງການ MRLG. ຊຶ່ງເປັນການສ້າງຕັ້ງຂຶ້ນໃໝ່ ສຳລັບ MRLG ແລະ ການຄຸ້ມຄອງ ຫຼື ຂັ້ນການຕັດສິນໃຈ ບາງຄັ້ງກໍຍັງບໍ່ຈະແຈ້ງ. ແຜນຄວາມຮັບຜິດຊອບ ຫຼື ແຜນທີ່ວຽກຕ່າງໆ ຂອງບັນດາຜູ້ມີສ່ວນກ່ຽວຂ້ອງ ສາມາດເຮັດໃຫ້ຈະແຈ້ງຂຶ້ນໄດ້ໃນອະນາຄົດ ແລະ ເລັ່ງລັດຂັ້ນຕອນໃຫ້ໄວຂຶ້ນ.
- ການກຳນົດຄວາມຕ້ອງການຂອງກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈ: ການອອກແບບເບື້ອງຕົ້ນ ຄວນໃຫ້ມີສ່ວນຮ່ວມຂອງຊາວບ້ານ, ອຳນາດການປົກຄອງບ້ານ ແລະ ອຳນາດການປົກຄອງເມືອງ, ເພື່ອວ່າ ແຜນງານການຮັບຮູ້ສິດ ສາມາດຕອບໂຈດຄວາມຕ້ອງການຂອງປະຊາຊົນ ແລະ ຈາກນັ້ນ, ສືບຕໍ່ດຳເນີນການ ດ້ວຍຂະບວນການຮັບຮູ້ສິດ ໂດຍອີງໃສ່ຜົນຂອງການປະເມີນຜົນຈາກຊາວບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນ.
- ຄວນມີໂຄງການແຍກຕ່າງຫາກ ເພື່ອຈັດຕັ້ງປະຕິບັດວຽກກິດຈະກຳວຽກງານປະຊາສຳພັນ ເພື່ອໃຫ້ສຳເລັດທຸກດ້ານຂອງຂັ້ນຕອນໂຄງການ ຈາກການອອກແບບ, ຂຽນປື້ມຄູ່ມື ແລະ ການປະເມີນຜົນ.

**ຂັ້ນສູນກາງ**

- ໃນໂຄງການນີ້, ກົມທີ່ດິນ ແມ່ນຮັບຜິດຊອບ ໃນການສ້າງປື້ມຄູ່ມື ວຽກງານປະຊາສຳພັນ ແລະ ຈັດຕັ້ງປະຕິບັດແຜນ ພ້ອມທັງ ມອບໝາຍແບ່ງຄວາມຮັບຜິດຊອບລະຫວ່າງຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ. ບັນຫາສຳຄັນແມ່ນວ່າ ເຄື່ອງມືເຫຼົ່ານີ້ ແມ່ນໃຫ້ມີໄວ້ໂດຍໄວທີ່ສຸດ ເພື່ອໃຫ້ທຸກໜ່ວຍງານທີ່ກ່ຽວຂ້ອງ ຮັບຮູ້ໄດ້ຈະແຈ້ງກ່ຽວກັບພາລະບົດບາດຂອງພວກເຂົາໃນການຈັດຕັ້ງປະຕິບັດໂຄງການ ແລະ ນອກເໜືອຈາກນັ້ນ. ຄວນມີເວລາພຽງພໍ ແລະ ສະຖານທີ່ເພື່ອໃຫ້ມີການປຶກສາຫາລືກັບບັນດາຜູ້ມີສ່ວນກ່ຽວຂ້ອງຕ່າງໆ ແລະ ການວາງແຜນ.
- ການປະສານງານລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງໄດ້ປັບປຸງໃຫ້ດີຂຶ້ນ. ບັນດາເມືອງ ແລະ ບ້ານ ບໍ່ໄດ້ຮັບແຈ້ງການຢ່າງເໝາະສົມ ແລະ ພາຍໃນໄລຍະເວລາສັ້ນໆ, ສະນັ້ນ, ຈຳນວນຂອງຜູ້ເຂົ້າຮ່ວມ ແມ່ນໜ້ອຍກວ່າທີ່ຄາດໄວ້. ການປະສານງານ ສຳເລັດແລ້ວ, ແຕ່ວ່າ ບໍ່ມີການຕິດຕາມຕື່ມ, ສະນັ້ນ, ຊາວບ້ານຫຼາຍຄົນ ບໍ່ສາມາດເຂົ້າຮ່ວມນຳໄດ້.
- ກົນໄກການປະສານງານ ແລະ ຂໍ້ກຳນົດໜ້າວຽກລະຫວ່າງຫ້ອງການຕ່າງໆ ຄວນເຮັດໃຫ້ຈະແຈ້ງ. ຈຸດສຸມຕົ້ນຕໍແມ່ນເພື່ອຝຶກອົບຮົມໃຫ້ແກ່ ສະຫະພັນແມ່ຍິງລາວ ແລະ ແນວລາວສ້າງຊາດ, ແຕ່ສຸດທ້າຍແລ້ວ, ພວກເຂົາບໍ່ໄດ້ມີສ່ວນຮ່ວມໃນວຽກງານປະຊາສຳພັນ ຍ້ອນງົບປະມານ ຫຼື ຂໍ້ຈຳກັດດ້ານເວລາ ຫຼື ຂາດການປະສານງານ?
- ການສື່ສານລະຫວ່າງຫົວໜ້າຊີ້ນຳ ແລະ ພະນັກງານວິຊາການ: ພະນັກງານວິຊາການບາງຄົນ ບໍ່ເຂົ້າໃຈແຈ້ງກ່ຽວກັບການຮ່ວມມື, ແຕ່ໄດ້ຮັບຜິດຊອບໃນການແບ່ງປັນຂໍ້ມູນໃຫ້ແກ່ຂັ້ນທ້ອງຖິ່ນ ແລະ ຊາວບ້ານ. ບັນຫານີ້ ອາດຈະເປັນຍ້ອນວ່າ ກອງປະຊຸມຕ່າງໆ ແມ່ນເຂົ້າຮ່ວມໂດຍພະນັກງານຂັ້ນສູງ, ແຕ່ພະນັກງານວິຊາການ ຖືກສົ່ງໄປພາກສະໜາມ;
- ເອກະສານ/ອຸປະກອນການຝຶກອົບຮົມທັງໝົດ ຄວນເຮັດໃຫ້ມີໄວ້ກ່ອນການເລີ່ມຕົ້ນຝຶກອົບຮົມ;
- ການຄັດເລືອກຜູ້ເຂົ້າຮ່ວມຝຶກອົບຮົມຢ່າງເອົາໃຈໃສ່, ກິດຈະກຳປະຊາສຳພັນ ຄວນເປັນສ່ວນໜຶ່ງ ຂອງໜ້າວຽກຂອງ ພວກເຂົາ.



**ຂັ້ນແຂວງ**

- ບົດບາດຂັ້ນແຂວງ ແມ່ນຫຍັງ? ພວກເຂົາຈະເຊື່ອມໂຍງ ຫຼື ຄວນຈະເຊື່ອມໂຍງເຂົ້າກັນແນວໃດ? ການຈັດສັນແບ່ງຄວາມຮັບຜິດຊອບຂອງທີມງານຂັ້ນແຂວງສຳລັບກິດຈະກຳປະຊາສຳພັນ ຫຼື ວຽກອື່ນໆ ຄວນກຳນົດຈະແຈ້ງ ແລະ ຄວນມີເວລາພຽງພໍ ເພື່ອທີມງານວິຊາການເຂົ້າຮ່ວມໃນທຸກຂັ້ນຕອນຂອງວຽກງານປະຊາສຳພັນ.

**ຂັ້ນເມືອງ**

- ການປະສານງານທີ່ດີຂຶ້ນກວ່າເກົ່າລະຫວ່າງທີມງານປະຊາສຳພັນ ແລະ ທີມງານຂຶ້ນທະບຽນທີ່ດິນ: ບົດບາດຂອງທີມງານປະຊາສຳພັນ ແລະ ທີມງານຂຶ້ນທະບຽນທີ່ດິນແມ່ນຫຍັງ? ໃຜຄວນເຮັດຫຍັງ ແລະ ເມື່ອໃດ? ເມື່ອໃດຄວນສ້າງຕາຕະລາງເວລາໃນການເຮັດວຽກປະຊາສຳພັນ?
- ຄວນມີການຈັດສັນງົບປະມານຢ່າງພຽງພໍໃຫ້ແກ່ ຂັ້ນເມືອງ ເພື່ອໃຫ້ພວກເຂົາສາມາດເຮັດກິດຈະກຳການສ້າງຄວາມຮັບຮູ້ເຂົ້າໃຈຢ່າງຕໍ່ເນື່ອງປົກກະຕິໃນຫຼາຍໝູ່ບ້ານ (ຄ່າສຳເນົາ, ຄ່າເອກະສານ, ຄ່ານ້ຳມັນລົດ?)
- ຄວນໃຫ້ເວລາພຽງພໍໃນການກະກຽມ ເພື່ອຝຶກຊ້ອມກ່ອນຈະໄປຈັດການຝຶກອົບຮົມໃຫ້ແກ່ຊາວບ້ານ, ເພື່ອໃຫ້ພະນັກງານຂັ້ນເມືອງ ມີຄວາມພ້ອມກະກຽມຕົນເອງ, ທັງດ້ານເນື້ອໃນ ແລະ ເຄື່ອງມືໃນການຝຶກອົບຮົມ.
- ການສະໜັບສະໜູນຢ່າງຕໍ່ເນື່ອງເພີ່ມຕື່ມ (ການຝຶກອົບຮົມທີ່ຕໍ່ເນື່ອງ) ໃຫ້ຂັ້ນເມືອງ
  - (i) ຜູ້ເຂົ້າຮ່ວມຫຼາຍຄົນ: ໄດ້ຮັບຄວາມຮູ້ເພີ່ມຂຶ້ນ ແຕ່ບໍ່ແນ່ໃຈ/ບໍ່ໝັ້ນໃຈ ຈະນຳໃຊ້ມັນແນວໃດ , ຕ້ອງການການຝຶກອົບຮົມເພີ່ມຕື່ມ ຫຼື ສືບຕໍ່ການສະໜັບສະໜູນ.
  - (ii) ການຝຶກເຮັດວຽກຕົວຈິງ ເປັນປະໂຫຍດຫຼາຍ.

**ຂັ້ນບ້ານ**

- ຊາວບ້ານ ຍັງສັບສົນກ່ຽວກັບໜ້າວຽກຫຼັກຕ່າງໆຂອງໂຄງການ ແລະ ມັກຈະເຂົ້າໃຈວ່າ ເປັນໂຄງການອອກໃບຕາດິນ ຫຼື ການຂຶ້ນທະບຽນທີ່ດິນ, ເປົ້າໝາຍຂອງໂຄງການ ແມ່ນບໍ່ຈະແຈ້ງ. ຄວນມີເວລາເພີ່ມຕື່ມ ເພື່ອອະທິບາຍລາຍລະອຽດ ໃຫ້ແກ່ບັນດາຊຸມຊົນ ທີ່ກ່ຽວຂ້ອງ.
- ຄວນມີກິດຈະກຳປະຊາສຳພັນ/ປູກຈິດສຳນຶກ ແລະ ຄວນມີເວລາພຽງພໍໃນລະຫວ່າງ ການປະກອບຄຳຄິດເຫັນຂອງຊາວບ້ານ ເພື່ອຕັ້ງຄຳຖາມ ແລະ ໄດ້ຮັບຄຳຕອບທີ່ຄົບຖ້ວນ (ໄດ້ມີການຂໍ ໃຫ້ມີ 1 ມື້ຕໍ່ບ້ານ)
- ຊາວບ້ານຕ້ອງການຂໍ້ມູນທີ່ຂຽນເປັນລາຍລັກອັກສອນ ຫຼື ປື້ມຄູ່ມືຈາກທີມງານຂັ້ນເມືອງ ເພື່ອໃຫ້ພວກເຂົາໄດ້ເບິ່ງຂໍ້ມູນ ຫຼື ນຳໃຊ້ສຳລັບການຝຶກອົບຮົມເພີ່ມຕື່ມໃນບ້ານ.
- ການປຶກສາຫາລືວິທີການທີ່ຈະເຜີຍແຜ່ຂໍ້ມູນເພີ່ມຕື່ມພາຍໃນບ້ານ.

**ຜູ້ສະໜອງການຝຶກອົບຮົມແບບໃກ້ຊິດ (ໂຄງການ LIFE ຫຼື ອື່ນໆ)**

- ທີມງານຄູຝຶກ ຂໍໃຫ້ເຮັດການປະເມີນຜົນພາກສະໜາມຂອງພື້ນທີ່ເປົ້າໝາຍໃນແຂວງ ຄຳມ່ວນ ກ່ອນການຝຶກອົບຮົມແບບໃກ້ຊິດ ເພື່ອໃຫ້ເຂົ້າໃຈສະພາບ ລວມກ່ຽວກັບບັນຫາໃນພື້ນທີ່ດັ່ງກ່າວ. ເຖິງຢ່າງໃດກໍຕາມ, ສິ່ງນີ້ແມ່ນເປັນໄປບໍ່ໄດ້ ຍ້ອນຂໍ້ຈຳກັດດ້ານເວລາ. ຍັງມີຂໍ້ແນະນຳ ເພື່ອໃຫ້ເຮັດການປະເມີນຜົນໃນພາກສະໜາມກ່ອນການຈັດຕັ້ງປະຕິບັດການຝຶກອົບຮົມ ເພື່ອໃຫ້ເນື້ອໃນການຝຶກອົບຮົມແທດເໝາະກັບບັນຫາສະເພາະຍິ່ງຂຶ້ນໃນພາກສະໜາມ.
- ສະເໜີໃຫ້ມີລະດັບຂັ້ນຂອງການຝຶກອົບຮົມຫຼາຍຊຸດ ໂດຍໄລຍະເວລາຍາວຂຶ້ນໃນຫຼາຍຫົວຂໍ້ ເພື່ອໃຫ້ມີເນື້ອໃນຫຼາຍຂຶ້ນໃນການຝຶກອົບຮົມ ແລະ ການຊີ້ນຳທີ່ດີກວ່າ ແລະ ຄວາມເປັນໄປໄດ້ສຳລັບການຝຶກອົບຮົມແບບໃກ້ຊິດ, ເຮັດວຽກຕົວຈິງຂອງພະນັກງານຂັ້ນເມືອງ ແມ່ນໃຫ້ຮັບປະກັນໄດ້.

  ເນື່ອງຈາກຂໍ້ຈຳກັດທາງດ້ານງົບປະມານ ແລະ ເວລາ, ລະດັບຂັ້ນຂອງການຝຶກອົບຮົມ ຖືກຕັດລົງໃຫ້ເປັນການຝຶກອົບຮົມແບບໃກ້ຊິດຊຸດດຽວເປັນເວລາ 5 ວັນ ສຳລັບແຕ່ລະເມືອງ.
- ຜູ້ສະໜອງການຝຶກອົບຮົມ ຄວນສຸມໃສ່ຕື່ມກ່ຽວກັບວິທີການຕົວຈິງ ທີ່ລັດຖະບານຍອມຮັບໄດ້ສຳລັບວິທີການແບບມີສ່ວນຮ່ວມ. ຜົນປະໂຫຍດຂອງວິທີການແບບມີສ່ວນຮ່ວມຜ່ານໂຄງການ LIFE ແມ່ນເຫັນໄດ້ (ບັນດາຜູ້ໃຫ້ສຳພາດ ໃຫ້ຄຸນຄ່າສູງຕໍ່ການມີສ່ວນຮ່ວມທີ່ດີຍິ່ງຂຶ້ນ



ຂອງຊາວບ້ານ), ແຕ່ວ່າ ມັນຂ້ອນຂ້າງຍາກສໍາລັບ ພະນັກງານລັດ ເພື່ອຈັດຕັ້ງປະຕິບັດວິທີການໂດຍພວກ ເຂົາເອງ. ແມ່ນຫຍັງຄວນປ່ຽນໃນວິທີການ ຫຼື ຂໍ້ຈໍາກັດ ອື່ນໆ ມີຫຍັງແດ່ (ເຊັ່ນ ງົບປະມານ, ເວລາ ແລະ ອື່ນໆ). ໂຄງການຄວນສ້າງຂໍ້ຄວາມສໍາຄັນ ເພື່ອເນັ້ນໜັກໃຫ້ເຫັນ ເຖິງຄວາມສໍາຄັນຂອງການມີສ່ວນຮ່ວມຂອງຊຸມຊົນໃນ ແຕ່ລະຂັ້ນຕອນ.

.

## ສະຫຼຸບ

ການຝຶກອົບຮົມແບບໃກ້ຊິດທັງ 4 ຄັ້ງຂອງໂຄງການ LIFE ສະໜັບສະໜູນການເພີ່ມທະວີຄວາມຮູ້ຂອງບັນດາຜູ້ເຂົ້າຮ່ວມພະນັກງານລັດທີ່ໄດ້ຮັບການຝຶກອົບຮົມແບບໃກ້ຊິດຈາກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຊຶ່ງກ່ຽວຂ້ອງກັບກົດໝາຍຕ່າງໆ ເຊັ່ນ ການນໍາໃຊ້ທີ່ດິນຕາມປະເພນີ ແລະ ສິດແມ່ຍິງໃນເລື່ອງທີ່ດິນ ພ້ອມທັງ ເຄື່ອງມື ແລະ ວິທີການສິດສອນ.

ເຖິງຢ່າງໃດກໍຕາມ, ຜົນຂອງການສໍາພາດ ແມ່ນແຕກຕ່າງກັນຫຼາຍໃນດ້ານການນໍາໃຊ້ຄວາມຮູ້ ແລະ ສິ່ງທີ່ເຂົ້າໃຈ ແລະ ຂຶ້ນກັບທີມງານຄຸ້ມຄອງຂັ້ນເມືອງ ແລະ ທີມງານທີ່ກ່ຽວຂ້ອງ.

ມີຫຼາຍປັດໄຈພາຍນອກ ເຊັ່ນ ງົບປະມານ, ການຄຸ້ມຄອງຈັດການ ຫຼື ຂໍ້ຈໍາກັດດ້ານເວລາ ທີ່ເປັນອຸປະສັກຂອງພະນັກງານລັດໃນການຈັດຕັ້ງປະຕິບັດກິດຈະກໍາການປູກຈິດສໍານຶກ.

ເຖິງຢ່າງໃດກໍຕາມ, ຊາວບ້ານບາງຄົນ ທີ່ໄດ້ເຂົ້າຮ່ວມປະຊາສໍາພັນກິດຈະກໍາການສ້າງຈິດສໍານຶກ ສາມາດຮຽນຮູ້ຈາກກິດຈະກໍາ ແລະ ເພີ່ມຄວາມຮູ້ໃຫ້ແກ່ພວກເຂົາ. ໃນຂະນະທີ່ຊາວບ້ານທຸກຄົນທີ່ຖືກສໍາພາດ ບໍ່ໄດ້ເຂົ້າຮ່ວມໃນກິດຈະກໍາປູກຈິດສໍານຶກ ໂດຍໂຄງການ, ຊຶ່ງສາມາດເຫັນໄດ້ວ່າ ຂໍ້ມູນໃນບ້ານ ບໍ່ໄດ້ຖືກສົ່ງຕໍ່ລະຫວ່າງຊາວບ້ານ ຫຼື ໂດຍອໍານາດການປົກຄອງບ້ານ. ກຸ່ມແມ່ຍິງທີ່ຖືກສໍາພາດ ຂ້ອນຂ້າງຈະຈື່ເນື້ອໃນໄດ້ດີ ແລະ ສາມາດອະທິບາຍ ແລະ ສົນທະນາໃນລະດັບສູງຂຶ້ນກ່ຽວກັບສິ່ງທີ່ພວກເຂົາໄດ້ຮຽນຮູ້. ຍັງເຫັນໄດ້ວ່າ ພວກເຂົາຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເມື່ອໜຶ່ງໃນກຸ່ມບໍ່ແນ່ໃຈກ່ຽວກັບບັນຫາໃດໜຶ່ງ.

ຄໍາຖາມຕ່າງໆທີ່ຊາວບ້ານຍົກຂຶ້ນ ສະແດງໃຫ້ເຫັນວ່າ ມີຫຼາຍສະພາບທີ່ບໍ່ຈະແຈ້ງ ຊຶ່ງຍັງຄົງຕິດພັນກັບກົດໝາຍວ່າດ້ວຍປ່າໄມ້ ແລະ ປ່າສາມປະເພດທີ່ອອກໃໝ່. ອີງຕາມການຂໍຂອງທີມງານຂັ້ນເມືອງ ແລະ ຊາວບ້ານ, ສິ່ງສໍາຄັນ ແມ່ນການສ້າງແຜນທີ່ການນໍາໃຊ້ທີ່ດິນ ແລະ ການແບ່ງເຂດທີ່ດິນຂອງໝູ່ບ້ານ ກ່ອນການຕັດສິນໃຈອອກໃບຕາດິນ. ຈໍາເປັນຕ້ອງໄດ້ມີລະບຽບການຈະແຈ້ງສໍາລັບ ໝູ່ບ້ານ ແລະ ຊາວບ້ານທີ່ຕັ້ງຖິ່ນຖານໃນປະເພດປ່າຕ່າງໆ ນັບແຕ່ມີການປັບປຸງກົດໝາຍວ່າດ້ວຍ ປ່າໄມ້ໃນປີ 2019. ສິດຂອງພວກເຂົາແມ່ນຫຍັງແດ່? ພວກເຂົາສາມາດອາໄສຢູ່ໃນບ້ານທີ່ຕັ້ງຢູ່ໃນປັດຈຸບັນນີ້ບໍ? ທີ່ດິນກະສິກໍາ ແລະ ທີ່ດິນການຜະລິດຂອງພວກເຂົາຈະເປັນແນວໃດ?

ປັດໄຈອື່ນອີກ ເຊັ່ນ ງົບປະມານເພື່ອໃຫ້ສາມາດຈັດຕັ້ງປະຕິບັດກິດຈະກໍາການປູກຈິດສໍານຶກໃນໝູ່ບ້ານ ໂດຍທີມງານຂັ້ນເມືອງ. ທີມງານຂັ້ນເມືອງ ກ່າວວ່າ ງົບປະມານເລັກໜ້ອຍ ແມ່ນຂໍ້ຈໍາກັດຕົ້ນຕໍເພື່ອເຮັດວຽກກິດຈະກໍາການປູກຈິດສໍານຶກຕ່າງໆ.

ບັນຫາສໍາຄັນ ແມ່ນການສື່ສານ ແລະ ການປະສານງານທີ່ດີຂຶ້ນລະຫວ່າງບັນດາຜູ້ມີສ່ວນກ່ຽວຂ້ອງ ແລະ ຄວາມຮັບຜິດຊອບ ແລະ ແຜນວຽກຈະແຈ້ງ. ກິດຈະກໍາການສ້າງຄວາມຮັບຮູ້ເຂົ້າໃຈ ຍັງບໍ່ທັນໄດ້ຫັນໄປສູ່ນະໂຍບາຍ ແລະ ເປັນໜ້າທີ່ວຽກຕໍ່ເນື່ອງຂອງຜູ້ມີສ່ວນກ່ຽວຂ້ອງພາກລັດ ຊຶ່ງສາມາດເຫັນໄດ້ ຈາກງົບປະມານ ແລະ ຂໍ້ຈໍາກັດດ້ານເວລາທີ່ພະນັກງານຂັ້ນເມືອງມັກຈະກ່າວເຖິງເລື້ອຍໆ.

ໂຄງການສົ່ງເສີມ ການຮຽນຮູ້ກ່ຽວກັບທີ່ດິນ
LIFE
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
LIWG
VILLAGE FOCUS INTERNATIONAL
ສະຫະພາບເອີຣົບ
European Union
MRLG